ສາລະບານ


ມະຕິຕົກລົງ....................................3
ລັດຖະດຳລັດ ....................................4
ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ....................................5
ໝວດທີ I ບົດບັນຍັດທົ່ວໄປ....................................5
ມາດຕາ 1. ໜ້າທີ່ຂອງກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ....................................5
ມາດຕາ 2. ຄວາມໝາຍຂອງການຂົນສົ່ງທາງບົກ ....................................5
ມາດຕາ 3. ການສົ່ງເສີມການຂົນສົ່ງທາງບົກ....................................5
ມາດຕາ 4. ພັນທະໃນການຂົນສົ່ງທາງບົກ....................................6
ມາດຕາ 5. ຂອບເຂດການນຳໃຊ້ກົດໝາຍ....................................6
ໝວດທີ II ລະບຽບການລວມການຄຸ້ມຄອງ ການຂົນສົ່ງທາງບົກ....................................6
ມາດຕາ 6. ລະບຽບການລວມ....................................6
ມາດຕາ 7. ປະເພດການຂົນສົ່ງທາງບົກ ....................................6
ມາດຕາ 8. ຂອບເຂດການຂົນສົ່ງທາງບົກ ....................................7
ມາດຕາ 9. ຂະໜາດລົດຂົນສົ່ງ ....................................7
ມາດຕາ 10. ເງື່ອນໄຂຜູ້ຂັບລົດຂົນສົ່ງ....................................8
ມາດຕາ 11. ການກວດກາເຕັກນິກ ....................................8
ມາດຕາ 12. ມາດຕະຖານ ແລະ ເງື່ອນໄຂຂອງອູ່ສ້ອມແປງລົດ ....................................8
ໝວດທີ III ວິສາຫະກິດການຂົນສົ່ງ, ການຂົນສົ່ງສະເພາະ ແລະ ການຂົນສົ່ງສ່ວນຕົວ ....................................8
ມາດຕາ 13. ການຂໍອະນຸຍາດ ເຮັດວິສາຫະກິດການຂົນສົ່ງ ....................................8
ມາດຕາ 14. ເງື່ອນໄຂຂອງຜູ້ທີ່ຈະໄດ້ຮັບອະນຸຍາດໃຫ້ເຮັດວິສາຫະກິດການຂົນສົ່ງ ....................................9
ມາດຕາ 15. ໃບທະບຽນວິສາຫະກິດການຂົນສົ່ງ ....................................9
ມາດຕາ 16. ເງື່ອນໄຂຂອງລົດທີ່ຈະນຳໃຊ້ເຂົ້າໃນວິສາຫະກິດການຂົນສົ່ງ ແລະ ການຂົນສົ່ງສະເພາະ..9
ມາດຕາ 17. ການປະກັນໄພລົດຂົນສົ່ງ ....................................9
ມາດຕາ 18. ໃບອະນຸຍາດ ແລ່ນລົດ....................................10
ມາດຕາ 19. ໃບນຳສົ່ງສິນຄ້າ ....................................10
ມາດຕາ 20. ສະຖານີລົດຂົນສົ່ງ ....................................10
ມາດຕາ 21. ສັນຍາຂົນສົ່ງ....................................10
ມາດຕາ 22. ເນື້ອໃນຕົ້ນຕໍຂອງສັນຍາຂົນສົ່ງສິນຄ້າ ....................................11
ມາດຕາ 23. ການຂົນສົ່ງວັດຖຸອັນຕະລາຍ ....................................11
ໝວດທີ IV ການຂົນສົ່ງລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນ ....................................12
ມາດຕາ 25. ການຂົນສົ່ງລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນ....................................12
ມາດຕາ 26. ສະຖານີລົດຂົນສົ່ງລະຫວ່າງປະເທດ....................................12
ໝວດທີ V ການຈັດສົ່ງສິນຄ້າ ແລະ ການໃຫ້ເຊົ່າລົດ ....................................12

ມາດຕາ 27. ການຈັດສົ່ງສິນຄ້າ ..... 12
ມາດຕາ 28. ຜູ້ຈັດສົ່ງສິນຄ້າ ..... 12
ມາດຕາ 29. ການອະນຸຍາດໃຫ້ເຮັດວິສາຫະກິດການຈັດສົ່ງສິນຄ້າ ..... 13
ມາດຕາ 30. ຜູ້ເຮັດວິສາຫະກິດໃຫ້ເຊົ່າລົດ ..... 13
ມາດຕາ 31. ພັນທະຂອງຜູ້ໃຫ້ເຊົ່າລົດ ແລະ ຂອງຜູ້ເຊົ່າລົດ ..... 13
ມາດຕາ 32. ການອະນຸຍາດໃຫ້ເຮັດວິສາຫະກິດລົດ ..... 14
ມາດຕາ 33. ການເກືອດຫ້າມ ..... 14
ໝວດທີ VI ການຄຸ້ມຄອງການຂົນສົ່ງທາງບົກ ..... 14
ມາດຕາ 34. ອົງການຄຸ້ມຄອງການຂົນສົ່ງທາງບົກ ..... 14
ມາດຕາ 35. ສິດ ແລະ ໜ້າທີ່ຂອງກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ..... 14
ມາດຕາ 36. ສິດ ແລະ ໜ້າທີ່ ຂອງພະແນກຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ..... 15
ມາດຕາ 37. ສິດ ແລະ ໜ້າທີ່ ຂອງຫ້ອງການຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ..... 15
ມາດຕາ 38. ການກວດກາການຂົນສົ່ງ ..... 15
ມາດຕາ 39. ຄະນະກຳມະການ ການຂົນສົ່ງ ..... 16
ມາດຕາ 40. ສະມາຄົມຜູ້ຂົນສົ່ງ ..... 16
ໝວດທີ VII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ..... 16
ມາດຕາ 41. ນະໂຍບາຍຕໍ່ຜູ້ມີຜົນງານ ..... 16
ມາດຕາ 42. ມາດຕະການຕໍ່ຜູ້ລະເມີດ ..... 17
ມາດຕາ 43. ມາດຕະການສຶກສາອົບຮົມ ..... 17
ມາດຕາ 44. ມາດຕະການປັບໃໝ ..... 17
ມາດຕາ 45. ມາດຕະການທາງອາຍາ ..... 18
ໝວດທີ VIII ບົດບັນຍັດສຸດທ້າຍ ..... 18
ມາດຕາ 46. ການຈັດຕັ້ງປະຕິບັດ ..... 18
ມາດຕາ 47. ຜົນສັກສິດ ..... 18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ                                                      ເລກທີ 03-97/ສພຊ

# ມະຕິຕົກລົງ

**ຂອງສະພາແຫ່ງຊາດ ແຫ່ງ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ

---

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 2 ຂໍ້ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມການສະເໜີ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 050/ຫສນຍ ລົງວັນທີ່ 27 ມີນາ 1997.

ພາຍຫລັງໄດ້ຄົ້ນຄ້ວາພິຈາລະນາຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນກົດໝາຍວ່າດ້ວຍການຂົນສົ່ງທາງບົກ ກອງປະຊຸມເທື່ອທີ່ 10 ສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ III ໃນວາລະປະຊຸມຕອນບ່າຍຂອງ ວັນທີ 12 ເມສາ 1997.

ຕົກລົງ:

<u>ມາດຕາ 1</u>: ຮັບຮອງເອົາກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ດ້ວຍຄະແນນສຽງຢ່າງເປັນເອກະສັນ.

<u>ມາດຕາ 2</u>: ມະຕິຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ່ 12 ເມສາ 1997
ປະທານສະພາແຫ່ງຊາດ
ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 35 ສປປ

# ລັດຖະດຳລັດ

**ຂອງປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການຂົນສົ່ງທາງບົກ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53 ຂໍ້ 1;
- ອີງຕາມມະຕິຕົກລົງຂອງກອງປະຊຸມເທື່ອທີ່ 10 ສະໄໝສາມັນ ຂອງສະພາແຫ່ງຊາດຊຸດທີ່ III ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ່ 03-97/ສພຊ ລົງວັນທີ 12 ເມສາ 1997;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 16/ຄປຈ ລົງວັນທີ 7 ພຶດສະພາ 1997.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1: ປະກາດໃຊ້ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ.
ມາດຕາ 2: ລັດຖະດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 31 ພຶດສະພາ 1997.
ປະທານປະເທດ.
ໜູຮັກ ພູມສະຫວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 03-97/ສພຊ
ວັນທີ 12/4/97.

# ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ

## ໝວດທີ I ບົດບັນຍັດທົ່ວໄປ

**ມາດຕາ 1. ໜ້າທີ່ຂອງກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ**

ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ມີໜ້າທີ່ກໍານົດລະບອບການຄຸ້ມຄອງ ການຈັດຕັ້ງ, ການເຄື່ອນໄຫວ, ການຂົນສົ່ງສິນຄ້າ, ການຂົນສົ່ງຜູ້ໂດຍສານຢູ່ພາຍໃນ, ລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນແນໃສ່ເສີມຂະຫຍາຍ, ການໂດຍສານ ແລະ ການຈໍລະຈອນແຈກຢາຍສິນຄ້າ ມີປະສິດທິຜົນ ແລະ ປອດໄພ. ນໍາໃຊ້ທ່າແຮງທາງດ້ານທີ່ຕັ້ງພູມສາດຂອງປະເທດທີ່ຈຸດໃຈກາງລະຫວ່າງບັນດາປະເທດ ໃນພາກພື້ນປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ການຮ່ວມມືສາກົນ.

**ມາດຕາ 2. ຄວາມໝາຍຂອງການຂົນສົ່ງທາງບົກ**

ການຂົນສົ່ງທາງບົກ ແມ່ນການຂົນສົ່ງສິນຄ້າ, ການຂົນສົ່ງຜູ້ໂດຍສານ, ການຂົນສົ່ງວັດຖຸເຄື່ອງຂອງ ຫລື ສັດຕາມຖະໜົນດ້ວຍຍານພາຫະນະກົນຈັກປະເພດຕ່າງໆ ນັບແຕ່ລົດໄຖນາເດີນຕາມທີ່ແກ່ລໍ້ຂົນສິນຄ້າ, ຂົນຄົນ ແລະ ຂົນສັດ, ລົດສາມລໍ້ຈົນເຖິງລົດໂອໂຕທຸກຂະໜາດລວມທັງລົດລາກແກ່ປະເພດຕ່າງໆ.

ສ່ວນການຂົນສົ່ງແບບປະຖົມປະຖານທີ່ເປັນມູນເຊື້ອນັ້ນບໍ່ຈັດເຂົ້າໃນກົດໝາຍສະບັບນີ້.

**ມາດຕາ 3. ການສົ່ງເສີມການຂົນສົ່ງທາງບົກ**

ລັດມີນະໂຍບາຍສົ່ງເສີມການຈັດຕັ້ງ ແລະ ບຸກຄົນເຮັດວິສາຫະກິດການຂົນສົ່ງທາງບົກ ເພື່ອຮັບໃຊ້ການຂົນສົ່ງສິນຄ້າ, ຄົນໂດຍສານ ແລະ ວັດຖຸສິ່ງຂອງຢູ່ພາຍໃນປະເທດ ລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນ.

### ມາດຕາ 4. ພັນທະໃນການຂົນສົ່ງທາງບົກ

ໃນການຂົນສົ່ງທາງບົກ ຜູ້ຂົນສົ່ງ ມີພັນທະຮັກສາຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ປົກປັກຮັກສາເສັ້ນທາງ, ສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ. ນອກຈາກນີ້ ຜູ້ຂົນສົ່ງຍັງຕ້ອງປະຕິບັດພັນທະອື່ນໆ ກ່ຽວກັບການຂົນສົ່ງຕາມລະບຽບກົດໝາຍ.

ຜູ້ໂດຍ ສານ, ຜູ້ຊື້ລົດຂົນສົ່ງສະເພາະ, ຜູ້ຊື້ລົດຂົນສົ່ງສ່ວນຕົວ, ເຈົ້າຂອງສິນຄ້າເຄື່ອງຂອງ ແລະ ຜູ້ຈັດສົ່ງສິນຄ້າ ກໍມີໜ້າທີ່ປະກອບສ່ວນໃນການປະຕິບັດພັນທະທີ່ກ່າວມາຂ້າງເທິງນີ້.

### ມາດຕາ 5. ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ນຳໃຊ້ສຳລັບ ການເຮັດວິສາຫະກິດການຂົນສົ່ງສິນຄ້າ ແລະ ການຂົນສົ່ງຜູ້ໂດຍສານ ລວມທັງການຂົນສົ່ງສະເພາະ ແລະ ການຂົນສົ່ງສ່ວນຕົວ ດ້ວຍພາຫະນະກົນຈັກທຸກຂະໜາດລວມທັງລົດລາກແກ່ທຸກປະເພດພາຍໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ລະຫວ່າງປະເທດ ແລະ ຜ່ານແດນ ຍົກເວັ້ນການຂົນສົ່ງທາງລົດໄຟ, ທາງທໍ່ ແລະ ການຂົນສົ່ງທາງລັດຖະການຊຶ່ງຈະມີຂໍ້ກຳນົດສະເພາະຕ່າງຫາກ.

## ໝວດທີ II ລະບຽບການລວມການຄຸ້ມຄອງ ການຂົນສົ່ງທາງບົກ

### ມາດຕາ 6. ລະບຽບການລວມ

ລະບຽບການລວມຂອງການຄຸ້ມຄອງການຂົນສົ່ງທາງບົກ ແມ່ນບັນດາຂໍ້ກຳນົດ ທີ່ວາງອອກເພື່ອຮັບປະກັນ ຄວາມປອດໄພຂອງຜູ້ໂດຍສານ ແລະ ຮັບປະກັນບໍ່ໃຫ້ສິນຄ້າ, ວັດຖຸເຄື່ອງຂອງຕົກເຮ່ຍເສຍຫາຍ ແລະ ໄປເຖິງຈຸດໝາຍຕາມກຳນົດເວລາ.

### ມາດຕາ 7. ປະເພດການຂົນສົ່ງທາງບົກ

ການຂົນສົ່ງທາງບົກ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີສາມປະເພດດັ່ງນີ້:

- ວິສາຫະກິດການຂົນສົ່ງ;
- ການຂົນສົ່ງສະເພາະ ;
- ການຂົນສົ່ງສ່ວນຕົວ.

ວິສາຫະກິດການຂົນສົ່ງ ແມ່ນການບໍລິການຮັບຈ້າງການຂົນສົ່ງຢູ່ພາຍໃນ, ລະຫວ່າງປະເທດ ຫລື ຜ່ານແດນ.

ການຂົນສົ່ງສະເພາະ ແມ່ນການຂົນສົ່ງສິນຄ້າ, ວັດຖຸເຄື່ອງຂອງ, ສັດ ຫລື ຄົນ ເພື່ອຮັບໃຊ້ຢູ່ພາຍໃນຂອບເຂດວິສາຫະກິດ ຫລື ຂອງສະເພາະຕົນເອງ;

ການຂົນສົ່ງສ່ວນຕົວ ແມ່ນການຂົນສົ່ງ ວັດຖຸເຄື່ອງຂອງ, ຄົນ ຫລື ສັດ ເພື່ອຮັບໃຊ້ວຽກງານສ່ວນຕົວ ທີ່ບໍ່ແມ່ນການຮັບຈ້າງຂົນສົ່ງທົ່ວໄປ ຫລື ບໍ່ແມ່ນການຂົນສົ່ງສະເພາະ.

ວິສາຫະກິດການຂົນສົ່ງ ແບ່ງອອກເປັນສອງຊະນິດ ດັ່ງນີ້:

- ການຂົນສົ່ງສິນຄ້າວັດຖຸເຄື່ອງຂອງ ຫລື ສັດ ;

- ການຂົນສົ່ງຜູ້ໂດຍສານ.

ການຂົນສົ່ງສະເພາະ ແລະ ການຂົນສົ່ງສ່ວນຕົວແບ່ງອອກເປັນ ສອງຊະນິດ ດັ່ງນີ້:

- ການຂົນສົ່ງວັດຖຸເຄື່ອງຂອງ, ສິນຄ້າ ຫລື ສັດ ;

- ການຂົນສົ່ງຄົນ.

## ມາດຕາ 8. ຂອບເຂດການຂົນສົ່ງທາງບົກ

ຂອບເຂດການຂົນສົ່ງທາງບົກ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນຂອບເຂດການຈະລາຈອນ ທີ່ກຳນົດໃຫ້ຍານພາຫະນະຂົນສົ່ງ ດຳເນີນການຂົນສົ່ງ ຊຶ່ງແບ່ງອອກເປັນສອງຂອບເຂດ ດັ່ງນີ້:

- ຂອບເຂດການຂົນສົ່ງພາຍໃນປະເທດ;

- ຂອບເຂດການຂົນສົ່ງລະຫວ່າງປະເທດ ແລະ ຂອບເຂດການຂົນສົ່ງຜ່ານແດນ.

ຂອບເຂດການຂົນສົ່ງພາຍໃນປະເທດ ແມ່ນການຂົນສົ່ງພາຍໃນປະເທດສະບານ, ການຂົນສົ່ງພາຍໃນແຂວງ ແລະ ການຂົນສົ່ງລະຫວ່າງແຂວງ.

ຂອບເຂດການຂົນສົ່ງລະຫວ່າງປະເທດ ແມ່ນການຂົນສົ່ງຈາກສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປຕ່າງປະເທດ ຫລື ຈາກຕ່າງປະເທດມາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຂອບເຂດການຂົນສົ່ງຜ່ານແດນ ແມ່ນການຂົນສົ່ງຈາກສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຜ່ານປະເທດໃດໜຶ່ງ ໄປປະເທດທີ່ສາມ ຫລື ການຂົນສົ່ງຈາກປະເທດໃດໜຶ່ງຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປປະເທດທີ່ສາມ.

## ມາດຕາ 9. ຂະໜາດລົດຂົນສົ່ງ

ລົດຂົນສົ່ງແບ່ງອອກເປັນສາມຂະໜາດ ດັ່ງນີ້:

- ລົດຂົນສົ່ງຂະໜາດນ້ອຍ ;

- ລົດຂົນສົ່ງຂະໜາດກາງ ;

- ລົດຂົນສົ່ງຂະໜາດໃຫ່ຍ.

ລົດຂົນສົ່ງສິນຄ້າວັດຖຸເຄື່ອງຂອງຂະໜາດນ້ອຍ ແມ່ນລົດຂົນສົ່ງທີ່ມີນ້ຳໜັກບັນທຸກ ທີ່ອະນຸຍາດ ລວມທັງນ້ຳໜັກລົດເປົ່າ ບໍ່ເກີນ ເຈັດ ໂຕນ.

ລົດຂົນສົ່ງສິນຄ້າວັດຖຸເຄື່ອງຂອງຂະໜາດກາງ ແມ່ນລົດຂົນສົ່ງທຸກຂະໜາດລວມທັງລົດລາກແກ່ທຸກປະເພດ ຊຶ່ງມີນ້ຳໜັກບັນທຸກທີ່ອະນຸຍາດໄລ່ທັງນ້ຳໜັກລົດເປົ່າສູງກວ່າ ເຈັດ ໂຕນ ຂຶ້ນຫາ ສິບຫ້າ ໂຕນ.

ລົດຂົນສົ່ງສິນຄ້າວັດຖຸເຄື່ອງຂອງຂະໜາດໃຫຍ່ ແມ່ນລົດຂົນສົ່ງທຸກຂະໜາດລວມທັງລົດລາກແກ່ປະເພດຕ່າງໆ ທີ່ມີນ້ຳໜັກບັນທຸກທີ່ອະນຸຍາດໄລ່ທັງນ້ຳໜັກລົດເປົ່າສູງກວ່າ ສິບຫ້າ ໂຕນ.

ລົດຂົນສົ່ງຜູ້ໂດຍສານ ຫລື ຂົນສົ່ງຄົນ ຂະໜາດນ້ອຍ ແມ່ນລົດຂົນສົ່ງທີ່ສາມາດບັນຈຸຜູ້ໂດຍສານ ຫລື ບັນຈຸຄົນແຕ່ ສອງ ບ່ອນນັ່ງ ເຖິງ ເຈັດບ່ອນນັ່ງ.

ລົດຂົນສົ່ງຜູ້ໂດຍສານ ຫລື ຂົນສົ່ງຄົນ ຂະໜາດກາງ ແມ່ນລົດຂົນສົ່ງ ທີ່ສາມາດບັນຈຸຜູ້ໂດຍສານ ຫລື ບັນຈຸຄົນ ເກີນກວ່າ ເຈັດບ່ອນນັ່ງ ເຖິງ ສາມສິບຫ້າ ບ່ອນນັ່ງ.

ລົດຂົນສົ່ງຜູ້ໂດຍສານ ຫລື ຂົນສົ່ງຄົນ ຂະໜາດໃຫຍ່ ແມ່ນລົດຂົນສົ່ງທີ່ສາມາດບັນຈຸຜູ້ໂດຍສານ ຫລື ບັນຈຸຄົນ ເກີນກວ່າ ສາມສິບຫ້າ ບ່ອນນັ່ງຂຶ້ນໄປ.

ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ເປັນຜູ້ວາງລະບອບການຄຸ້ມຄອງລົດຂົນສົ່ງ ທີ່ກ່າວມາເທິງນີ້ລວມທັງນ້ຳໜັກບັນທຸກ ທີ່ອະນຸຍາດສູງສຸດ ສຳລັບລົດຂົນສົ່ງຂະໜາດໃຫຍ່.

## ມາດຕາ 10. ເງື່ອນໄຂຜູ້ຂັບລົດຂົນສົ່ງ

ຜູ້ຂັບລົດຂົນສົ່ງສິນຄ້າ ແລະ ຂົນສົ່ງຜູ້ໂດຍສານຕ້ອງມີເງື່ອນໄຂ ດັ່ງນີ້:

- ມີໃບຂັບຂີ່ຖືກຕ້ອງຕາມລະບຽບການ ;
- ມີສຸຂະພາບສົມບູນດີ ;
- ປະຕິບັດຕາມກົດຈະລາຈອນຢ່າງເຂັ້ມງວດ ;
- ຂັບລົດບໍ່ໃຫ້ເກີນກຳນົດເວລາທີ່ລະບຽບການວາງອອກ ;
- ບໍ່ຂັບລົດ ໃນເວລາມຶນເມົາ ແລະ ບໍ່ເສບຢາເສບຕິດ.

## ມາດຕາ 11. ການກວດກາເຕັກນິກ

ລົດຂົນສົ່ງທຸກຄັນຕ້ອງໄດ້ຮັບການກວດກາເຕັກນິກ ຕາມກຳນົດເວລາຢ່າງເຂັ້ມງວດ ຢູ່ສະຖານີ ກວດກາເຕັກນິກ ຊຶ່ງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງເປັນຜູ້ກຳນົດ.

## ມາດຕາ 12. ມາດຕະຖານ ແລະ ເງື່ອນໄຂຂອງອູ່ສ້ອມແປງລົດ

ເພື່ອຮັບປະກັນທາງດ້ານເຕັກນິກຂອງລົດຂົນສົ່ງ ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ເປັນຜູ້ອອກຂໍ້ກຳນົດ ກ່ຽວກັບມາດຕະຖານ ແລະ ເງື່ອນໄຂຂອງອູ່ສ້ອມແປງລົດ.

# ໝວດທີ III ວິສາຫະກິດການຂົນສົ່ງ, ການຂົນສົ່ງສະເພາະ ແລະ ການຂົນສົ່ງສ່ວນຕົວ

## ມາດຕາ 13. ການຂໍອະນຸຍາດ ເຮັດວິສາຫະກິດການຂົນສົ່ງ

ການຂໍອະນຸຍາດເຮັດວິສາຫະກິດການຂົນສົ່ງສິນຄ້າ ແລະ ການຂົນສົ່ງຜູ້ໂດຍສານທາງບົກພາຍໃນປະເທດ, ລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນໃຫ້ປະຕິບັດຕາມມາດຕາ 16, 17, 18 ແລະ 19 ຂອງກົດໝາຍວ່າດ້ວຍທຸລະກິດ ສ່ວນການລົງທຶນຂອງຕ່າງປະເທດນັ້ນໃຫ້ປະຕິບັດຕາມມາດຕາ 23, 24, 25 ແລະ 26 ຂອງກົດໝາຍວ່າດ້ວຍ ການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຂອງຕ່າງປະເທດ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

### ມາດຕາ 14. ເງື່ອນໄຂຂອງຜູ້ທີ່ຈະໄດ້ຮັບອະນຸຍາດໃຫ້ເຮັດວິສາຫະກິດການຂົນສົ່ງ

ບຸກຄົນ ຫລື ການຈັດຕັ້ງທີ່ຈະໄດ້ຮັບອະນຸຍາດໃຫ້ສ້າງຕັ້ງ, ຂຶ້ນທະບຽນວິສາຫະກິດການຂົນສົ່ງໄດ້ ຕ້ອງມີເງື່ອນໄຂດັ່ງນີ້:

- ມີຄວາມສາມາດທາງດ້ານວິຊາຊີບການຂົນສົ່ງ;
- ມີຄວາມສາມາດທາງດ້ານທຶນຮອນ;
- ມີຄວາມຊື່ສັດຕໍ່ວິຊາຊີບການຂົນສົ່ງ;

ນອກຈາກນີ້ ຜູ້ຮ້ອງຂໍຍັງຕ້ອງໄດ້ປະຕິບັດຕາມເງື່ອນໄຂອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍທຸລະກິດອີກ.

### ມາດຕາ 15. ໃບທະບຽນວິສາຫະກິດການຂົນສົ່ງ

ໃບທະບຽນວິສາຫະກິດການຂົນສົ່ງສິນຄ້າ ແລະ ການຂົນສົ່ງຜູ້ໂດຍສານ ບໍ່ສາມາດໃຫ້ຜູ້ອື່ນນຳໃຊ້, ໃຫ້ຜູ້ອື່ນເຊົ່າ ຫລື ບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

### ມາດຕາ 16. ເງື່ອນໄຂຂອງລົດທີ່ຈະນຳໃຊ້ເຂົ້າໃນວິສາຫະກິດການຂົນສົ່ງ ແລະ ການຂົນສົ່ງສະເພາະ

ລົດທີ່ຈະນຳໃຊ້ເຂົ້າໃນການເຮັດວິສາຫະກິດການຂົນສົ່ງ ແລະ ການຂົນສົ່ງສະເພາະ ຕ້ອງປະກອບດ້ວຍເງື່ອນໄຂຕົ້ນຕໍ ດັ່ງນີ້:

- ໄດ້ຈົດທະບຽນເປັນລົດຂົນສົ່ງ;
- ໄດ້ຂຶ້ນທະບຽນປ້າຍລົດ;
- ຖືກຕ້ອງຕາມເຕັກນິກການຂົນສົ່ງ;
- ມີປະກັນໄພທີ່ກ່ຽວຂ້ອງ;
- ໄດ້ເສຍຄ່າທຳນຽມທາງປະຈຳປີ;
- ໄດ້ຜ່ານການກວດກາເຕັກນິກຕາມລະບຽບການ.

ສຳລັບເງື່ອນໄຂລະອຽດກ່ຽວກັບລົດ ທີ່ຈະນຳໃຊ້ເຂົ້າໃນວິສາຫະກິດການຂົນສົ່ງນັ້ນ ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ເປັນຜູ້ກຳນົດ.

### ມາດຕາ 17. ການປະກັນໄພລົດຂົນສົ່ງ

ລົດຂົນສົ່ງສິນຄ້າ ແລະ ຂົນສົ່ງຜູ້ໂດຍສານ ທຸກຂະໜາດ, ລົດຂົນສົ່ງສະເພາະ ແລະ ລົດຂົນສົ່ງສ່ວນຕົວລວມທັງລົດລາກແກ່ປະເພດຕ່າງໆ ຢູ່ພາຍໃນປະເທດຕ້ອງມີການປະກັນໄພ ໂດຍສະເພາະແມ່ນການປະກັນໄພບຸກຄົນທີສາມ. ສຳລັບລົດຂົນສົ່ງລະຫວ່າງປະເທດ ແລະ ຂົນສົ່ງຜ່ານແດນນັ້ນ ນອກຈາກການປະກັນບຸກຄົນທີສາມແລ້ວ ຍັງຕ້ອງມີການປະກັນໄພຜູ້ຂັບຂີ່ ແລະ ການປະກັນໄພສິນຄ້າທີ່ຂົນສົ່ງອີກດ້ວຍ.

## ມາດຕາ 18. ໃບອະນຸຍາດ ແລ່ນລົດ

ໃບອະນຸຍາດແລ່ນລົດ ແມ່ນໃບອະນຸຍາດທີ່ອອກໃຫ້ແກ່ລົດທີ່ເຮັດວິສາຫະກິດ ການຂົນສົ່ງທີ່ຖືກຕ້ອງຕາມປະເພດ, ມາດຕະຖານເຕັກນິກແລະຂອບເຂດການຂົນສົ່ງ ຊຶ່ງຂະແໜງການຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງເປັນຜູ້ອະນຸມັດ.

ລົດທີ່ນຳໃຊ້ເຂົ້າໃນການຂົນສົ່ງສະເພາະເພື່ອຮັບໃຊ້ວິສາຫະກິດ ຫລື ກິດຈະການຂອງຕົນເອງ ກໍຕ້ອງມີໃບອະນຸຍາດແລ່ນລົດເຊັ່ນດຽວກັນ.

ໃນກໍລະນີທີ່ມີການດັດແປງມາດຕະຖານເຕັກນິກ ຫລື ປ່ຽນແປງຂອບເຂດການຂົນສົ່ງຂອງລົດກໍ ຕ້ອງຂໍໃບ ອະນຸຍາດແລ່ນລົດໃໝ່.

## ມາດຕາ 19. ໃບນຳສົ່ງສິນຄ້າ

ໃນການເຮັດວິສາຫະກິດການຂົນສົ່ງສິນຄ້າ ຜູ້ຂົນສົ່ງຕ້ອງປະກອບໃບນຳສົ່ງສິນຄ້າຕາມແບບພິມທີ່ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງວາງອອກ ຊຶ່ງຕ້ອງຕິດຕາມໄປພ້ອມກັບລົດແຕ່ລະຖ້ຽວ. ການຂົນສົ່ງສະເພາະ ເພື່ອຮັບໃຊ້ທຸລະກິດ ຫລື ກິດຈະການຂອງຕົນເອງ ກໍຕ້ອງມີໃບນຳສົ່ງສິນຄ້າຕິດຕາມໄປພ້ອມກັບລົດແຕ່ລະຖ້ຽວ ເຊັ່ນດຽວກັນ.

## ມາດຕາ 20. ສະຖານີລົດຂົນສົ່ງ

ລົດວິສາຫະກິດການຂົນສົ່ງສິນຄ້າ ແລະ ລົດຂົນສົ່ງຜູ້ໂດຍສານ ຕ້ອງເຂົ້າຈອດ ແລະ ອອກຕາມສະຖານີ ຫລື ບ່ອນຈອດລົດຂົນສົ່ງ ຊຶ່ງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ເປັນຜູ້ກຳນົດ ມາດຕະຖານເຕັກນິກ ການກໍ່ສ້າງ.

ສະຖານີລົດຂົນສົ່ງອາດຈະແບ່ງອອກເປັນ ສອງປະເພດຄື:

- ສະຖານີລົດຂົນສົ່ງສິນຄ້າ ;
- ສະຖານີລົດຂົນສົ່ງຜູ້ໂດຍສານ.

ໃນກໍລະນີຈຳເປັນ ກໍຈະຈັດຕັ້ງ ສະຖານີລົດຂົນສົ່ງສັດສະເພາະ.

## ມາດຕາ 21. ສັນຍາຂົນສົ່ງ

ວິສາຫະກິດການຂົນສົ່ງສິນຄ້າ ແລະ ການຂົນສົ່ງຜູ້ໂດຍສານ ແມ່ນເຮັດຕາມສັນຍາເປັນລາຍລັກອັກສອນ, ສັນຍາປາກເປົ່າ ຫລື ສັນຍາໃນຕົວ.

ສັນຍາວິສາຫະກິດ ການຂົນສົ່ງສິນຄ້າ ແມ່ນການຕົກລົງລະຫວ່າງ ຜູ້ເຮັດວິສາຫະກິດການຂົນສົ່ງ ກັບເຈົ້າຂອງສິນຄ້າ ກ່ຽວກັບການເຄື່ອນຍ້າຍສິນຄ້າ ຈາກຈຸດໜຶ່ງໄປຫາຈຸດໜຶ່ງ ຊຶ່ງຜູ້ເຮັດວິສາຫະກິດການຂົນສົ່ງສິນຄ້າ ມີພັນທະນຳສິນຄ້າໄປສູ່ຈຸດໝາຍ ໂດຍບໍ່ໃຫ້ມີການຕົກເຮ່ຍ ເສຍຫາຍ, ຮັບປະກັນຄຸນນະພາບ ແລະ ເຈົ້າຂອງສິນຄ້າຕ້ອງຊຳລະຄ່າຂົນສົ່ງ ໃຫ້ຜູ້ຂົນສົ່ງສິນຄ້າ ຕາມທີ່ໄດ້ຕົກລົງກັນ.

ສັນຍາວິສາຫະກິດ ການຂົນສົ່ງຜູ້ໂດຍສານ ແມ່ນການຕົກລົງລະຫວ່າງຜູ້ເຮັດວິສາຫະກິດການຂົນສົ່ງ ກັບຜູ້ໂດຍສານກ່ຽວກັບການເດີນທາງຈາກຈຸດໜຶ່ງໄປສູ່ອີກຈຸດໜຶ່ງ ຊຶ່ງຜູ້ເຮັດວິສາຫະກິດ

ການຂົນສົ່ງ ມີພັນທະນຳສົ່ງຜູ້ໂດຍສານໄປສູ່ຈຸດໝາຍດ້ວຍຄວາມປອດໄພ, ຮັບປະກັນບໍ່ໃຫ້ເຄື່ອງຂອງຜູ້ໂດຍສານຕົກເຮ່ຍ ເສຍຫາຍ ລວມທັງອຳນວຍຄວາມສະດວກໃຫ້ແກ່ຜູ້ໂດຍສານອີກດ້ວຍ ແລະ ຜູ້ໂດຍສານຕ້ອງຈ່າຍຄ່າໂດຍສານໃຫ້ແກ່ຜູ້ເຮັດວິສາຫະກິດ ການຂົນສົ່ງຕາມທີ່ໄດ້ຕົກລົງກັນ.

### ມາດຕາ 22. ເນື້ອໃນຕົ້ນຕໍຂອງສັນຍາຂົນສົ່ງສິນຄ້າ

ສັນຍາຂົນສົ່ງສິນຄ້າ ມີເນື້ອໃນຕົ້ນຕໍດັ່ງນີ້:

- ປະເພດສິນຄ້າລວມທັງປະລິມານ, ບໍລິມາດ ແລະ ນ້ຳໜັກ ;
- ສະຖານທີ່ຕົ້ນທາງບ່ອນສົ່ງ ແລະ ສະຖານທີ່ ປາຍທາງບ່ອນຮັບສິນຄ້າ ;
- ວິທີບໍລິການ ຊຶ່ງໝາຍເຖິງການບັນຈຸຫຸ້ມຫໍ່, ການເກັບຮັກສາສິນຄ້າ, ການຍົກຖ່າຍ, ການຄ່ຽນຖ່າຍ;
- ລາຄາຂົນສົ່ງສິນຄ້າ ;
- ປະກັນໄພ ;
- ວິທີການຊຳລະຄ່າຂົນສົ່ງ.

ສຳລັບສັນຍາຂົນສົ່ງສິນຄ້າລະຫວ່າງປະເທດ ແລະ ຂົນສົ່ງຜ່ານແດນ ໃຫ້ປະຕິບັດຕາມສັນຍາ ການຂົນສົ່ງສາກົນ.

ຜູ້ບໍລິການຂົນສົ່ງສິນຄ້າ ແລະ ເຈົ້າຂອງສິນຄ້າຕ້ອງປະຕິບັດສັນຍາຢ່າງຄົບຖ້ວນ.

### ມາດຕາ 23. ການຂົນສົ່ງວັດຖຸອັນຕະລາຍ

ການຂົນສົ່ງວັດຖຸອັນຕະລາຍ: ວັດຖຸເຄມີ, ວັດຖຸໄວໄຟ, ວັດຖຸລະເບີດນັ້ນ ຈະແມ່ນວິສາຫະກິດການຂົນສົ່ງ, ການຂົນສົ່ງສະເພາະ ຫລື ການຂົນສົ່ງສ່ວນຕົວກໍຕາມ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຕ້ອງປະຕິບັດຕາມລະບຽບການຂົນສົ່ງວັດຖຸອັນຕະລາຍ ຢ່າງເຂັ້ມງວດ.

### ມາດຕາ 24. ຄວາມຮັບຜິດຊອບຂອງຜູ້ຂົນສົ່ງ

ໃນວິສາຫະກິດການຂົນສົ່ງສິນຄ້າ ຜູ້ຂົນສົ່ງມີຄວາມຮັບຜິດຊອບ ໃຊ້ແທນຄ່າເສຍຫາຍ ຖ້າວ່າສິນຄ້ານັ້ນຫາກບໍ່ເຖິງຈຸດທີ່ໝາຍ ເຖິງຈຸດທີ່ໝາຍບໍ່ທັນຕາມກຳນົດເວລາ ຊຶ່ງເຮັດໃຫ້ເຈົ້າຂອງສິນຄ້າ ໄດ້ຮັບຄວາມເສຍຫາຍ, ສິນຄ້າເສຍຄຸນນະພາບ ຫລື ຕົກເຮ່ຍ ເສຍຫາຍ ຍ້ອນຄວາມຜິດພາດຂອງຜູ້ຂົນສົ່ງ.

ໃນການຂົນສົ່ງຜູ້ໂດຍສານ ຜູ້ຂົນສົ່ງມີຄວາມຮັບຜິດຊອບ ໃຊ້ແທນຄ່າເສຍຫາຍ ຖ້າວ່າການນຳສົ່ງຜູ້ໂດຍສານຫາກບໍ່ເຖິງຈຸດທີ່ໝາຍ, ຜູ້ໂດຍສານບໍ່ໄດ້ຮັບຄວາມປອດໄພ ຫລື ເຄື່ອງຂອງຜູ້ໂດຍສານຫາກຕົກເຮ່ຍ ເສຍຫາຍ ຍ້ອນຄວາມຜິດພາດຂອງຜູ້ຂົນສົ່ງ.

ນອກຈາກນີ້ຜູ້ຂົນສົ່ງ ອາດຈະໄດ້ຮັບຜິດຊອບທາງອາຍາ ໃນກໍລະນີທີ່ມີການກະທຳຜິດທາງອາຍາ.

## ໝວດທີ IV ການຂົນສົ່ງລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນ

### ມາດຕາ 25. ການຂົນສົ່ງລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນ

ໃນການຂົນສົ່ງລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນນັ້ນ ລັດຖະບານຈະປະຕິບັດຕາມສັນຍາທີ່ຕົນໄດ້ເຊັນກັບຕ່າງປະເທດ ແລະ ອະນຸຍາດໃຫ້ມີການຂົນສົ່ງຜ່ານດິນແດນຂອງຕົນ ພ້ອມທັງໃຫ້ຄວາມສະດວກ, ໃຫ້ການຮັບປະກັນທີ່ຈຳເປັນ ຕາມສົນທິສັນຍາ ແລະ ສັນຍາສາກົນທີ່ຕົນໄດ້ເຂົ້າຮ່ວມ.

ການຂົນສົ່ງລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນ ອາດຈະມີການຄ່ຽນຖ່າຍ ຫລື ບໍ່ມີການຄ່ຽນຖ່າຍ ຕາມການຕົກລົງຂອງລັດຖະບານ.

ການຂົນສົ່ງຂອງຕ່າງປະເທດຢູ່ບົນດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງປະຕິບັດຕາມກົດຈະລາຈອນ ແລະ ລະບຽບກົດໝາຍຂອງລາວ.

### ມາດຕາ 26. ສະຖານີລົດຂົນສົ່ງລະຫວ່າງປະເທດ

ລົດວິສາຫະກິດຂົນສົ່ງສິນຄ້າ ແລະ ລົດຂົນສົ່ງຜູ້ໂດຍສານລະຫວ່າງປະເທດ ຫລື ຜ່ານແດນທີ່ເຂົ້າ ແລະ ອອກຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງເຂົ້າຈອດ ແລະ ອອກຕາມສະຖານີລົດຂົນສົ່ງ ລະຫວ່າງປະເທດ ຊຶ່ງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງເປັນຜູ້ກຳນົດ.

ສະຖານີຂົນສົ່ງລະຫວ່າງປະເທດແບ່ງອອກເປັນ ສອງປະເພດຄື:

- ສະຖານີລົດຂົນສົ່ງສິນຄ້າ ;
- ສະຖານີລົດຂົນສົ່ງຜູ້ໂດຍສານ.

ໃນກໍລະນີທີ່ຈຳເປັນ ກໍຈະສ້າງ ສະຖານີລົດຂົນສົ່ງສັດ ສະເພາະ.

## ໝວດທີ V ການຈັດສົ່ງສິນຄ້າ ແລະ ການໃຫ້ເຊົ່າລົດ

### ມາດຕາ 27. ການຈັດສົ່ງສິນຄ້າ

ເພື່ອອຳນວຍຄວາມສະດວກໃຫ້ແກ່ການຈັດສົ່ງສິນຄ້າພາຍໃນປະເທດ, ລະຫວ່າງປະເທດ ແລະ ຜ່ານແດນນັ້ນ ລັດອະນຸຍາດໃຫ້ມີຜູ້ເຮັດວິສາຫະກິດການບໍລິການຈັດສົ່ງສິນຄ້າ.

### ມາດຕາ 28. ຜູ້ຈັດສົ່ງສິນຄ້າ

ຜູ້ຈັດສົ່ງສິນຄ້າ ແມ່ນບຸກຄົນ ຫລື ການຈັດຕັ້ງ ທີ່ເຮັດວິສາຫະກິດການບໍລິການປະກອບເອກະສານ, ເຕົ້າໂຮມ, ຫຸ້ມຫໍ່ ແລະ ບັນຈຸສິນຄ້າ ເພື່ອມອບໃຫ້ຜູ້ຂົນສົ່ງ.

ຜູ້ຈັດສົ່ງສິນຄ້າ ມີຄວາມຮັບຜິດຊອບກ່ຽວກັບຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານການນຳສົ່ງສິນຄ້າ, ຮັບປະກັນການຈັດສົ່ງສິນຄ້າຢ່າງຄົບຖ້ວນຕາມຈຳນວນ ທີ່ມີຢູ່ໃນບັນຊີ ແລະ ບໍ່

ໃຫ້ສິນຄ້າຕົກເຮ່ຍ ເສຍຫາຍ ຫລື ເສຍຄຸນນະພາບຍ້ອນການບັນຈຸຫຸ້ມຫໍ່ ແລະ ຮັບປະກັນໃຫ້ສິນຄ້າໄປເຖິງຈຸດທີ່ໝາຍ.

### ມາດຕາ 29. ການອະນຸຍາດໃຫ້ເຮັດວິສາຫະກິດການຈັດສົ່ງສິນຄ້າ

ບຸກຄົນ ຫລື ການຈັດຕັ້ງ ທີ່ຈະໄດ້ຮັບອະນຸຍາດ ໃຫ້ເຮັດວິສາຫະກິດ ການບໍລິການຈັດສົ່ງສິນຄ້າ ຕ້ອງມີເງື່ອນໄຂ ແລະ ປະຕິບັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 13, 14, 15, 16, ແລະ 17 ຂອງກົດໝາຍສະບັບນີ້.

### ມາດຕາ 30. ຜູ້ເຮັດວິສາຫະກິດໃຫ້ເຊົ່າລົດ

ເພື່ອສົ່ງເສີມວິສາຫະກິດການຂົນສົ່ງ, ການຂົນສົ່ງສະເພາະ ແລະ ການຂົນສົ່ງສ່ວນຕົວພາຍໃນປະເທດ, ລະຫວ່າງປະເທດ ຫລື ຜ່ານແດນ ໃຫ້ມີການຂະຫຍາຍຕົວນັ້ນ ລັດອະນຸຍາດໃຫ້ມີການເຮັດວິສາຫະກິດການໃຫ້ເຊົ່າລົດ.

ຜູ້ເຮັດວິສາຫະກິດການໃຫ້ເຊົ່າລົດແມ່ນບຸກຄົນ ຫລື ການຈັດຕັ້ງທີ່ມີພາຫະນະກົນຈັກປະເພດຕ່າງໆ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ເພື່ອບໍລິການໃຫ້ແກ່ຜູ້ຕ້ອງການເຊົ່າ ໄປເຮັດວິສາຫະກິດການຂົນສົ່ງ ຫລື ໄປນໍາໃຊ້ເຂົ້າໃນການຂົນສົ່ງສະເພາະ ຫລື ການຂົນສົ່ງສ່ວນຕົວເປັນບາງຄັ້ງຄາວ ຫລື ເປັນປະຈໍາຕາມສັນຍາ.

ການໃຫ້ເຊົ່າລົດ ແບ່ງອອກເປັນ ສອງປະເພດ ດັ່ງນີ້:

- ການໃຫ້ເຊົ່າລົດໂດຍຜູ້ເຊົ່ານໍາໄປໃຊ້ເອງ ;
- ການໃຫ້ເຊົ່າລົດລວມທັງບໍລິການຮັບໃຊ້ພ້ອມ.

### ມາດຕາ 31. ພັນທະຂອງຜູ້ໃຫ້ເຊົ່າລົດ ແລະ ຂອງຜູ້ເຊົ່າລົດ

ໃນການໃຫ້ເຊົ່າລົດ ໂດຍຜູ້ເຊົ່ານໍາໄປໃຊ້ເອງນັ້ນ ຜູ້ໃຫ້ເຊົ່າຕ້ອງມອບລົດ ທີ່ຖືກຕ້ອງຕາມເງື່ອນໄຂ ຂອງມາດຕາ 16 ຂອງກົດໝາຍສະບັບນີ້ ໃຫ້ແກ່ຜູ້ເຊົ່າໄປໃຊ້ ຕາມກໍານົດເວລາທີ່ໄດ້ຕົກລົງກັນ. ຜູ້ເຊົ່າລົດ ຕ້ອງຊໍາລະຄ່າເຊົ່າ, ນໍາໃຊ້ລົດໃຫ້ຖືກຕ້ອງຕາມເປົ້າໝາຍທີ່ໄດ້ຕົກລົງກັນໄວ້ໃນສັນຍາ, ສົ່ງລົດຄືນໃນສະພາບດີຄືເກົ່າ. ນອກຈາກນີ້ຜູ້ໃຫ້ເຊົ່າລົດ ແລະ ຜູ້ເຊົ່າຍັງຕ້ອງປະຕິບັດຕາມເງື່ອນໄຂອື່ນ ທີ່ໄດ້ກໍານົດໄວ້ໃນສັນຍາ.

ໃນການໃຫ້ເຊົ່າລົດ ລວມທັງບໍລິການຮັບໃຊ້ພ້ອມນັ້ນ ນອກຈາກພັນທະທີ່ກໍານົດໄວ້ໃນວັກໜຶ່ງເທິງນີ້ແລ້ວ ຜູ້ໃຫ້ເຊົ່າຍັງຕ້ອງສະໜອງຜູ້ຂັບລົດໃຫ້ຜູ້ເຊົ່າ ຊຶ່ງຕ້ອງຮັບປະກັນວຽກງານການຂົນສົ່ງ ແລະ ຄວາມປອດໄພໃຫ້ແກ່ຜູ້ເຊົ່າລົດອີກດ້ວຍ ແລະ ປະຕິບັດຕາມເງື່ອນໄຂອື່ນໆ ທີ່ໄດ້ກໍານົດໄວ້ໃນສັນຍາ. ຜູ້ເຊົ່າມີພັນທະຊໍາລະຄ່າເຊົ່າລົດຕາມທີ່ໄດ້ຕົກລົງກັນໃນສັນຍາ.

### ມາດຕາ 32. ການອະນຸຍາດໃຫ້ເຮັດວິສາຫະກິດລົດ

ບຸກຄົນ ຫລື ການຈັດຕັ້ງ ທີ່ຈະໄດ້ຮັບອະນຸຍາດ ໃຫ້ເຮັດວິສາຫະກິດການໃຫ້ເຊົ່າລົດຕ້ອງມີເງື່ອນໄຂ ແລະ ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 13, 14, 15, 16, 17, 18, ແລະ 23 ຂອງກົດໝາຍສະບັບນີ້.

ນອກຈາກນີ້ຜູ້ໃຫ້ເຊົ່າລົດ ຍັງຕ້ອງປະຕິບັດຕາມລະບຽບການກ່ຽວກັບ ການຄຸ້ມຄອງວິສາຫະກິດການໃຫ້ເຊົ່າລົດ ທີ່ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງວາງອອກ.

### ມາດຕາ 33. ການເກືອດຫ້າມ

ຫ້າມບຸກຄົນ ຫລື ການຈັດຕັ້ງ ທີ່ບໍ່ໄດ້ຮັບອະນຸຍາດນັ້ນ ຫາກເຮັດວິສາຫະກິດການຂົນສົ່ງ, ການຈັດສົ່ງສິນຄ້າ ຫລື ການໃຫ້ເຊົ່າລົດ.

## ໝວດທີ VI ການຄຸ້ມຄອງການຂົນສົ່ງທາງບົກ

### ມາດຕາ 34. ອົງການຄຸ້ມຄອງການຂົນສົ່ງທາງບົກ

ອົງການຄຸ້ມຄອງການຂົນສົ່ງທາງບົກປະກອບດ້ວຍ:

- ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ;
- ພະແນກຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງແຂວງ, ກໍາແພງນະຄອນ ຫລື ເຂດພິເສດ ;
- ຫ້ອງການຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງເມືອງ.

### ມາດຕາ 35. ສິດ ແລະ ໜ້າທີ່ຂອງກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ

ໃນການຄຸ້ມຄອງການຂົນສົ່ງທາງບົກກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້:

- ສ້າງແຜນຍຸດທະສາດ ແລະ ແຜນແມ່ບົດ ໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນກ່ຽວກັບການພັດທະນາການຂົນສົ່ງທາງບົກ;
- ວາງລະບຽບການຄຸ້ມຄອງການຂົນສົ່ງທາງບົກ ໃນຂອບເຂດທົ່ວປະເທດ;
- ຄົ້ນຄ້ວາ ແລະ ມີຄໍາເຫັນກ່ຽວກັບຄໍາຮ້ອງ ຂໍເຮັດວິສາຫະກິດການຂົນສົ່ງທາງບົກ ລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນ;
- ຄົ້ນຄ້ວານະໂຍບາຍ ແລະ ລາຄາຄ່າຂົນສົ່ງທາງບົກ ແລ້ວ ນໍາສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ;
- ຄົ້ນຄ້ວາຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ ກ່ຽວກັບການຂົນສົ່ງທາງບົກໂດຍປະສານສົມທົບກັບອົງການທີ່ກ່ຽວຂ້ອງ;
- ຄຸ້ມຄອງບັນຊີລົດຂົນສົ່ງ ໃນຂອບເຂດທົ່ວປະເທດ;
- ກວດກາການເຮັດວິສາຫະກິດການຂົນສົ່ງທາງບົກ;

- ຮ່ວມມືກັບສາກົນ ແລະ ຊອກຫາແຫລ່ງທຶນ ເພື່ອພັດທະນາການຂົນສົ່ງທາງບົກ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບການຂົນສົ່ງທາງບົກ.

### ມາດຕາ 36. ສິດ ແລະ ໜ້າທີ່ ຂອງພະແນກຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ

ໃນການຄຸ້ມຄອງການຂົນສົ່ງທາງບົກ ພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ແຂວງ, ກຳແພງນະຄອນ ຫລື ເຂດພິເສດ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

- ຜັນຂະຫຍາຍແຜນຍຸດທະສາດ ແລະ ແຜນແມ່ບົດ ກ່ຽວກັບພັດທະນາການຂົນສົ່ງທາງບົກ;

- ຄົ້ນຄ້ວາ ແລະ ມີຄຳເຫັນ ກ່ຽວກັບຄຳຮ້ອງຂໍ ເຮັດວິສາຫະກິດການຂົນສົ່ງທາງບົກພາຍໃນປະເທດ ຢູ່ໃນແຂວງ, ກຳແພງນະຄອນ ຫລື ເຂດພິເສດ ທີ່ຕົນຮັບຜິດຊອບ;

- ຂຶ້ນທະບຽນລົດຂົນສົ່ງພາຍໃນແຂວງ, ກຳແພງນະຄອນ ຫລື ເຂດພິເສດ ຕາມລະບຽບການທີ່ທາງກະຊວງ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງວາງອອກ;

- ຄຸ້ມຄອງບັນຊີລົດຂົນສົ່ງ ພາຍໃນແຂວງ, ກຳແພງນະຄອນ ຫລື ເຂດພິເສດຂອງຕົນ;

- ອອກໃບອະນຸຍາດແລ່ນລົດຂົນສົ່ງທາງບົກ ພາຍໃນປະເທດ;

- ຄຸ້ມຄອງ ແລະ ກວດກາ ການດຳເນີນການຂົນສົ່ງທາງບົກ ພາຍໃນປະເທດ, ລະຫວ່າງປະເທດ ແລະ ການຂົນສົ່ງຜ່ານແດນ;

- ກວດກາເຕັກນິກລົດຂົນສົ່ງ, ຄຸ້ມຄອງອູ່ສ້ອມແປງ ແລະ ສະຖານີກວດກາເຕັກນິກລົດຂົນສົ່ງ;

- ກຳນົດສະຖານທີ່ ແລະ ຄຸ້ມຄອງສະຖານີລົດຂົນສົ່ງ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບການຂົນສົ່ງທາງບົກ ຕາມການມອບ ໝາຍຂອງກະຊວງ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ.

### ມາດຕາ 37. ສິດ ແລະ ໜ້າທີ່ ຂອງຫ້ອງການຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ

ຫ້ອງການຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງເມືອງ ມີໜ້າທີ່ຄຸ້ມຄອງລົດຂົນສົ່ງ ແລະ ບ່ອນຈອດລົດຂົນສົ່ງ ພາຍໃນເມືອງຂອງຕົນ ຕາມການມອບໝາຍຂອງພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງແຂວງ, ກຳແພງນະຄອນ ຫລື ເຂດພິເສດ.

### ມາດຕາ 38. ການກວດກາການຂົນສົ່ງ

ເພື່ອໃຫ້ຜູ້ເຮັດວິສາຫະກິດການຂົນສົ່ງທາງບົກ, ຜູ້ຂົນສົ່ງສະເພາະ ແລະ ຜູ້ຂົນສົ່ງສ່ວນຕົວປະຕິບັດລະບຽບຫລັກການ ຂອງການຂົນສົ່ງຢ່າງເຂັ້ມງວດ, ຮັບປະກັນຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍນັ້ນກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ມີໜ້າທີ່ຈັດຕັ້ງການກວດກາ ການຂົນສົ່ງຢ່າງເປັນລະບົບປົກກະຕິ.

ເພື່ອຮັບປະກັນການກວດກາການຂົນສົ່ງທາງບົກ ໃຫ້ມີປະສິດທິຜົນນັ້ນ ອາດຈະຈັດຕັ້ງຕຳຫລວດທາງຫລວງຂຶ້ນ.

### ມາດຕາ 39. ຄະນະກຳມະການ ການຂົນສົ່ງ

ເພື່ອເຮັດໃຫ້ການຂົນສົ່ງທັງພາຍໃນປະເທດ, ລະຫວ່າງປະເທດ ຫລື ຜ່ານແດນ ມີຄວາມສະດວກໃນການຄຸ້ມຄອງນັ້ນ ລັດຖະບານອາດຈະຈັດຕັ້ງຄະນະກຳມະການ ການຂົນສົ່ງແຫ່ງຊາດຂຶ້ນຕາມການສະເໜີຂອງກະຊວງ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ. ຄະນະກຳມະການຂົນສົ່ງແຫ່ງຊາດມີໜ້າທີ່ດັ່ງນີ້:

- ຄົ້ນຄ້ວາແຜນຍຸດທະສາດ ແລະ ແຜນການພັດທະນາການຂົນສົ່ງ;
- ຄົ້ນຄ້ວາກຳນົດມາດຖານເຕັກນິກຂອງຍານພາຫະນະ ການຂົນສົ່ງ;
- ຄົ້ນຄ້ວາວິທີການປ້ອງກັນຄວາມປອດໄພ ໃນການຂົນສົ່ງ;
- ໃຫ້ຄຳປຶກສາແກ່ຜູ້ບໍລິການກ່ຽວກັບບັນຫາການຂົນສົ່ງສິນຄ້າ ແລະ ການຂົນສົ່ງຜູ້ໂດຍສານ;
- ຄົ້ນຄ້ວາກ່ຽວກັບການກຳນົດເສັ້ນທາງ ແລະ ການວາງອັດຕາຄ່າຂົນສົ່ງໃນແຕ່ລະໄລຍະ.

ໃນກໍລະນີທີ່ຈຳເປັນກໍອາດຈະຈັດຕັ້ງຄະນະກຳມະການຂົນສົ່ງຂັ້ນແຂວງ, ກຳແພງນະຄອນ ຫລື ເຂດພິເສດຂຶ້ນ ຊຶ່ງມີໜ້າທີ່ຕົ້ນຕໍດັ່ງນີ້:

- ໃຫ້ຄຳປຶກສາຫາລື ກ່ຽວກັບການຂົນສົ່ງ;
- ກຳນົດເສັ້ນທາງ ແລະ ອັດຕາລາຄາຂົນສົ່ງ ບົນພື້ນຖານທີ່ກະຊວງ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງວາງອອກ;
- ຊຸກຍູ້ການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບການຂົນສົ່ງ.

### ມາດຕາ 40. ສະມາຄົມຜູ້ຂົນສົ່ງ

ເພື່ອເຮັດໃຫ້ການຄຸ້ມຄອງ ການຂົນສົ່ງສິນຄ້າ ແລະ ການຂົນສົ່ງຜູ້ໂດຍສານມີປະສິດທິຜົນ ແລະ ມີຄວາມເປັນລະບຽບຮຽບຮ້ອຍນັ້ນ ລັດຈະອະນຸຍາດໃຫ້ຈັດຕັ້ງສະມາຄົມຜູ້ຂົນສົ່ງທາງບົກຂຶ້ນຕາມລະບຽບທີ່ກະຊວງ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງວາງອອກ.

## ໝວດທີ VII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 41. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງໃດຫາກໄດ້ດຳເນີນການຂົນສົ່ງທາງບົກ ຢ່າງມີຄຸນນະພາບ, ຮັບປະກັນ ຄວາມປອດໄພ, ມີຄວາມເປັນລະບຽບຮຽບຮ້ອຍ, ປົກປັກຮັກສາສິ່ງແວດລ້ອມໄດ້ດີ, ປະຕິບັດອັດຕາລາຄາຄ່າຂົນສົ່ງຕາມລະບຽບການຢ່າງເຂັ້ມງວດ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍ ຫລຸດຜ່ອນ ຫລື ຍົກເວັ້ນພາສີອາກອນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ.

## ມາດຕາ 42. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງໃດຫາກໄດ້ລະເມີດ ກົດໝາຍວ່າດ້ວຍການຂົນສົ່ງທາງບົກສະບັບນີ້ ຈະຖືກສຶກສາອົບຮົມ, ຖືກປັບໃໝ ຫລື ຖືກລົງໂທດທາງອາຍາ. ນອກຈາກນີ້ ຜູ້ລະເມີດ ອາດຈະຖືກປະຕິບັດໂທດເພີ້ມອີກ ດັ່ງນີ້: ຖືກງົດການດຳເນີນກິດຈະການ, ຖືກຖອນໃບອະນຸຍາດ, ຖືກຮິບພາຫະນະ ທີ່ນຳໃຊ້ເຂົ້າໃນການກະທຳຜິດ.

## ມາດຕາ 43. ມາດຕະການສຶກສາອົບຮົມ

ໃນກໍລະນີທີ່ມີການລະເມີດໃນສະຖານເບົາ ແລະ ເປັນການລະເມີດເທື່ອທຳອິດ ຜູ້ລະເມີດຈະຖືກສຶກສາອົບຮົມ.

## ມາດຕາ 44. ມາດຕະການປັບໃໝ

ຈະຖືກປັບໃໝແຕ່ 3.000 ກີບ ຫາ 10.000 ກີບ ບຸກຄົນໃດຫາກໄດ້ມີການລະເມີດໃດໜຶ່ງດັ່ງຕໍ່ໄປນີ້:

- ບໍ່ມີໃບອະນຸຍາດແລ່ນລົດຕິດໄປນຳລົດ;
- ບໍ່ມີໃບນຳສົ່ງສິນຄ້າ;
- ດຳເນີນການຂົນສົ່ງບໍ່ໄປຕາມເສັ້ນທາງທີ່ກຳນົດໃຫ້;
- ບໍ່ມີໃບຢັ້ງຢືນເສຍຄ່າທຳນຽມ ແລະ ອາກອນຕ່າງໆ ກ່ຽວກັບທຸລະກິດການຂົນສົ່ງ;
- ບໍ່ມີໃບຂັບຂີ່ລົດເບົາ ສຳລັບຜູ້ຂັບລົດຮັບໃຊ້ທຸລະກິດຂົນສົ່ງ ແລະ ການຂົນສົ່ງສະເພາະ.

ຈະຖືກປັບໃໝແຕ່ 15.000 ກີບ ຫາ 30.000 ກີບ ສຳລັບບຸກຄົນໃດທີ່ໄດ້ມີການລະເມີດໃດໜຶ່ງດັ່ງຕໍ່ໄປນີ້:

- ໃບອະນຸຍາດດຳເນີນທຸລະກິດການຂົນສົ່ງໝົດອາຍຸ;
- ບໍ່ມີໃບກວດກາເຕັກນິກລົດຂົນສົ່ງ;
- ບໍ່ມີປະກັນໄພ;
- ບໍ່ມີໃບຂັບຂີ່ລົດໜັກ ສຳລັບຜູ້ຂັບລົດຮັບໃຊ້ທຸລະກິດຂົນສົ່ງ ແລະ ການຂົນສົ່ງສະເພາະ.

ຈະຖືກປັບໃໝແຕ່ 31.000 ກີບ ຫາ 50.000 ກີບ ບຸກຄົນໃດຫາກໄດ້ມີການລະເມີດໃດໜຶ່ງດັ່ງຕໍ່ໄປນີ້:

- ຈອດລົດ ຫລື ເອົາສິນຄ້າຂຶ້ນ ຫລື ລົງບໍ່ຖືກຕາມສະຖານທີ່ ທີ່ກຳນົດໃຫ້;
- ແລ່ນລົດໄວເກີນກຳນົດທີ່ອະນຸຍາດ;
- ບັນທຸກເກີນກຳນົດ ທີ່ອະນຸຍາດ.

ຈະຖືກປັບໃໝແຕ່ 51.000 ກີບ ຫາ 100.000 ກີບ ບຸກຄົນໃດຫາກໄດ້ການລະເມີດໃດໜຶ່ງດັ່ງຕໍ່ໄປນີ້:

- ເຮັດວິສາຫະກິດການຂົນສົ່ງທາງບົກ, ຈັດສົ່ງສິນຄ້າ ຫລື ໃຫ້ເຊົ່າລົດໂດຍບໍ່ໄດ້ຮັບອະນຸຍາດ;

- ເຮັດວິສາຫະກິດການຂົນສົ່ງທາງບົກ , ຈັດສົ່ງສິນຄ້າ ຫລື ໃຫ້ເຊົ່າລົດໂດຍບໍ່ຖືກຕ້ອງຕາມປະເພດທີ່ໄດ້ຮັບອະນຸຍາດ;

- ນຳໃຊ້ໃບອະນຸຍາດຂອງຜູ້ອື່ນ ຫລື ເອົາໃບອະນຸຍາດຂອງຕົນໃຫ້ຜູ້ອື່ນ ນຳໃຊ້ເພື່ອເຮັດວິສາຫະກິດການຂົນສົ່ງທາງບົກ.

## ມາດຕາ 45. ມາດຕະການທາງອາຍາ

ຈະຖືກລົງໂທດຕາມກົດໝາຍອາຍາ ບຸກຄົນໃດຫາກໄດ້ມີກະທຳຜິດດັ່ງຕໍ່ໄປນີ້:

- ປະກອບເອກະສານເທັດ ເພື່ອໃຫ້ໄດ້ອະນຸຍາດເຮັດວິສາຫະກິດການຂົນສົ່ງທາງບົກ;
- ປອມແປງເອກະສານຕ່າງໆ ກ່ຽວກັບການເຮັດວິສາຫະກິດການຂົນສົ່ງທາງບົກ;
- ມີການກະທຳຜິດທາງອາຍາ ໃນການຂົນສົ່ງ;
- ຂັດຂວາງເຈົ້າໜ້າທີ່ໃນການກວດກາ ການຂົນສົ່ງທາງບົກ.

ພະນັກງານ ຫລື ລັດຖະກອນຜູ້ໃດ ຫາກໄດ້ມີການກະທຳຜິດທາງອາຍາ ໃນການຂົນສົ່ງທາງບົກ: ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ຈະຖືກລົງໂທດຕາມກົດໝາຍອາຍາ.

# ໝວດທີ VIII ບົດບັນຍັດສຸດທ້າຍ

## ມາດຕາ 46. ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

## ມາດຕາ 47. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ຫລັງຈາກ ໜຶ່ງຮ້ອຍແປດສິບວັນ ນັບແຕ່ມື້ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ບັນດາຂໍ້ກຳນົດ, ບົດບັນຍັດທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 12 ເມສາ 1997

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ